**ບົດກ່າວເປີດ**
**ໂດຍ: ທ່ານ ສຸລິວັດ ສຸວັນນະຈູມຄຳ**
**ຮອງລັດຖະມົນຕີ, ກະຊວງການເງິນ**
**ໃນກອງປະຊຸມ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ**
**ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ**

*ວັນທີ 09 ຕຸລາ 2025, ໂຮງແຮມຣໍລິເດ ອິນ ແອນ ສະຫວິທສ໌ວຽງຈັນ, ນະຄອນຫຼວງວຽງຈັນ*

---

**ຮຽນ**:- ທ່ານ ບັກໂຮເດັຍ ເບີຄານ໋ອຟ, ຜູ້ປະສານງານອົງການສປຊ ປະຈຳ ສປປ ລາວ ທີ່ນັບຖື;

- ທ່ານ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ບັນດາທ່ານ ຮອງລັດຖະມົນຕີ ທີ່ນັບຖື,
- ບັນດາ ທ່ານຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຫົວໜ້າກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ທີ່ຮັກແພງ;
- ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ມີສຳນັກງານ, ຫ້ອງການ ຕັ້ງຢູ່ ສປປ ລາວ, ຮ່າໂນຍ ສສ ຫວຽດນາມ ແລະ ບາງກອກ ປະເທດໄທ ທີ່ນັບຖື;

***ບັນດາທ່ານແຂກທີ່ມີກຽດ ທີ່ເຂົ້າຮ່ວມທາງອອນລາຍ ແລະອອບລາຍ, ທ່ານ ຍິງ ແລະທ່ານຊາຍ !***

ຂ້າພະເຈົ້າ ໃນນາມຕາງໜ້າໃຫ້ ລັດຖະບານ ສປປ ລາວ ກໍ່ຄື ກະຊວງການເງິນ ຮູ້ສຶກເປັນກຽດ ແລະ ປິຕິຊົມຊື່ນເປັນຢ່າງຍິ່ງ ທີ່ໄດ້ເຂົ້າຮ່ວມ ແລະ ຮັບກຽດເປັນປະທານກ່າວເປີດ ກອງປະຊຸມ ລະດັບສູງ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ໃນມື້ນີ້, ຂໍສະແດງຄວາມຊົມເຊີຍ ຄະນະຈັດຕັ້ງກອງປະຊຸມ ແລະ ຂອບໃຈ ອົງການສະຫະປະຊາຊາດ ທີ່ມີຄວາມພະຍາຍາມສູງ ໃຫ້ການຮ່ວມມື ແລະ ສະໜັບສະໜູນກະກຽມຈັດກອງປະຊຸມ ເປັນຢ່າງດີ. ເຊິ່ງເປັນກອງປະຊຸມທີ່ສຳຄັນ ຕໍ່ກັບວຽກງານການພັດທະນາ ທັງເປັນເວທີປຶກສາຫາລື - ແລກປ່ຽນບົດຮຽນ ການສ້າງຄວາມເຂົ້າໃຈ ທີ່ເປັນໜຶ່ງອັນດຽວກັນ ເພື່ອຮັບປະກັນທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ທີ່ຈະມາເຖິງ ໃນວັນທີ 19 ພະຈິກ 2025 ໂດຍໃຫ້ກຽດກ່າວເປີດກອງປະຊຸມຢ່າງເປັນທາງການ ຂອງພະນະ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ສືບຕໍ່ເປັນປະທານໃນການດຳເນີນກອງປະຊຸມ ໂດຍ ພະນະ ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ. ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນເພື່ອ: (1) ນຳສະເໜີ ຮ່າງສະບັບທີ 5 ຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງຍຸດທະສາດດ້ານການເງິນ ແລະ ກອບການຕິດຕາມ - ປະເມີນຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ; (2) ລາຍງານຄວາມຄືບໜ້າໃນການ

ກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025, ແຈ້ງໃຫ້ຊາບກ່ຽວກັບການຈັດກອງປະຊຸມສົນທະນາ ລະດັບສູງ ເພື່ອນໍາຜົນຂອງກອງປະຊຸມດັ່ງກ່າວ ມານໍາສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ນໍາສະເໜີຮ່າງຖະແຫຼງການວຽງຈັນ ສະບັບທີ III.

ດັ່ງທີ່ບັນດາທ່ານໄດ້ຮູ້ແລ້ວວ່າ, ລັດຖະບານ ສປປ ລາວ ຢູ່ໃນໄລຍະປີສຸດທ້າຍໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ແລະ ຢູ່ໃນໄລຍະຊຸ້ນຂ້ຽວສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ໄປພ້ອມໆກັນ ເຊິ່ງປັດຈຸບັນແຜນດັ່ງກ່າວ ໄດ້ສໍາເລັດ ຮ່າງທີ 5 ເປັນທີ່ຮຽບຮ້ອຍແລ້ວ. ນອກຈາກນັ້ນ ຍັງໄດ້ລົງເລິກໃສ່ການ ສ້າງຍຸດທະສາດ ແລະ ສ້າງຄວາມເຂັ້ມແຂງຮອບດ້ານ ໃນວຽກງານການພັດທະນາ ລວມທັງ ຖະແຫຼງການວຽງຈັນ ສະບັບທີ III, ແຜນການພັດທະນາຂອງແຕ່ລະຂະແໜງການ. ໃນນັ້ນ, ບັນດາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ໄດ້ປະສານສົມທົບກັນຢ່າງລະອຽດ ພາຍໃຕ້ການຊີ້ນໍາຂອງ ປະທານ ແລະ ປະທານຮ່ວມ ຂອງ 10 ໜ່ວຍງານຂະແໜງການ ໄດ້ສົ່ງຄໍາເຫັນໂດຍໄດ້ເຊື່ອມສານເອົາຜົນໄດ້ຮັບທີ່ຈະແຈ້ງຂອງຂະແໜງການຕົນ ເຂົ້າກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ແນ່ໃສ່ ການວາງແຜນທີ່ມີປະສິດທິຜົນໂດຍອີງໃສ່ຕົວຊີ້ບອກ ແລະ ຜົນໄດ້ຮັບ ທີ່ມີຄຸນນະພາບ ເພື່ອຮັບປະກັນຄວາມສອດຄ່ອງ ລະຫວ່າງ ແຜນການ ແລະ ງົບປະມານ ເຊິ່ງກວມເອົາການລົງທຶນຂອງລັດ, ການຊ່ວຍເຫລືອທາງການ ເພື່ອການພັດທະນາ (ຊກພ), ການລົງທຶນພາກເອກະຊົນ ທັງພາຍໃນ-ສາກົນ ແລະ ການລົງທຶນເຂົ້າໃນລະບົບການເງິນ.

*ບັນດາທ່ານທີ່ນັບຖື ທັງຫຼາຍ*

ຂໍຖືໂອກາດນີ້ແຈ້ງໃຫ້ທ່ານຊາບວ່າ, ການກະກຽມກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ທີ່ຈະຈັດຂຶ້ນໃນວັນທີ 19 ພະຈິກ 2025 ນີ້, ພວກເຮົາໄດ້ເຮັດສໍາເລັດ ຮ່າງແນວຄວາມຄິດ ແລະ ວາລະກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ໂດຍຜ່ານການປຶກສາຫາລືໃນ ກອງປະຊຸມປະທານ ແລະ ປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ໃນວັນທີ 18 ກໍລະກົດ 2025, ເຊິ່ງກົມຮ່ວມມື ແລະການເງິນສາກົນ ກໍ່ຄືກອງເລຂາ ລະດັບຊາດ ເພື່ອຂະບວນການໂຕະມົນ ກໍ່ໄດ້ນໍາເອົາເນື້ອໃນຈິດຂອງການປຶກສາຫາລື ແລະ ຄໍາຄິດເຫັນ ສັງລວມ ລາຍງານຄະນະນໍາ ກະຊວງການເງິນ ພ້ອມທັງ, ລາຍງານໃຫ້ແກ່ຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ ເປັນທີ່ຮຽບຮ້ອຍແລ້ວ ຫຼັງຈາກນັ້ນ, ລັດຖະບານ ແຫ່ງ ສປປ ລາວ ຈຶ່ງໄດ້ອອກແຈ້ງການ ສະບັບເລກທີ 1631/ຫສນຍ, ລົງວັນທີ 23 ກັນຍາ 2025 ວ່າດ້ວຍການເຫັນດີຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ເຂົ້າຮ່ວມເປັນປະທານກ່າວເປີດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ໃຫ້ທ່ານ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນໍາວຽກຂົງເຂດເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະເທດ ສືບຕໍ່ເປັນປະທານກອງປະຊຸມ.

ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2025 ແມ່ນຢູ່ໃນທາມກາງສະພາບເສດຖະກິດສາກົນທີ່ຜັນແປຢ່າງສັບສົນ ໂດຍສະເພາະແມ່ນສົງຄາມການຄ້າ, ການຂຶ້ນພາສີນຳເຂົ້າຂອງສະຫະລັດອາເມລິກາ, ຄວາມເຄັ່ງຕຶງດ້ານພູມສາດການເມືອງ, ເສດຖະກິດໂລກຖົດຖອຍ. ພ້ອມກັນນັ້ນ, ສະພາບພາຍໃນພວກເຮົາຍັງພົບບັນຫາການຂາດດຸນງົບປະມານ, ຂາດດຸນການຊຳລະໜີ້ສິນກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດຍັງຕ່ຳ ບວກກັບໃນໄລຍະຊຸມປີຜ່ານມານີ້ ໄດ້ເກີດໄພທຳມະຊາດນ້ຳຖ້ວມ, ເຊິ່ງໄດ້ເຮັດໃຫ້ເນື້ອທີ່ທຳການຜະລິດ, ພື້ນຖານໂຄງລ່າງເສຍຫາຍຫຼາຍພໍສົມຄວນ. ຕໍ່ກັບບັນຫາດັ່ງກ່າວ ລັດຖະບານ, ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ລວມທັງ ປະຊາຊົນ, ທຸກພາກສ່ວນຂອງສັງຄົມ, ບັນດາປະເທດເພື່ອນມິດ, ວົງຄະນາຍາດສາກົນ ແລະ ອົງການຈັດຕັ້ງສາກົນ ກໍ່ໄດ້ເອົາໃຈໃສ່ສຸມທຸກກຳລັງແຮງຂອງຕົນໃຫ້ການສະໜັບສະໜູນຊ່ວຍເຫຼືອ ແລະ ຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ ທີ່ ລັດຖະບານ ສປປ ລາວ ໄດ້ກຳນົດອອກດ້ວຍຄວາມຕັ້ງໜ້າເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ.

ນອກຈາກທີ່ກ່າວມາຂ້າງເທິງນັ້ນ, ສິ່ງສຳຄັນອີກອັນໜຶ່ງ ລັດຖະບານ ສປປ ລາວ ໄດ້ປັບປຸງການກົງຈັກການຈັດຕັ້ງຂອງລັດຖະບານ ຕາມມະຕິຂອງສະພາແຫ່ງຊາດ ໂດຍໂຮມເອົາບັນດາກະຊວງຂະແໜງການເຂົ້າກັນເວົ້າລວມ ເວົ້າສະເພາະກໍ່ຄືການໂຮມກະຊວງແຜນການ ແລະການລົງທຶນ ເຂົ້າກັບກະຊວງການເງິນ, ແຕ່ພວກເຮົາກໍ່ໄດ້ດຳເນີນວຽກງານຢ່າງເປັນປົກກະຕິ ເພື່ອເຮັດໃຫ້ ການບໍລິຫານ, ຕິດຕາມ ແລະ ຄຸ້ມຄອງ ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ບໍ່ຢຸດຢັ້ງ, ສາມາດເສີມຂະຫຍາຍ ແລະ ດຳລົງບົດບາດ ໃນການຫັນແນວທາງນະໂຍບາຍ ມາເປັນແຜນພັດທະນາ ເພື່ອອຳນວຍຄວບຄຸມການບໍລິຫານ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ໃຫ້ມີປະສິດທິພາບປະທິດທິຜົນສູງ ເຊິ່ງຖືໄດ້ວ່າເປັນກາລະໂອກາດອັນດີ ທີ່ພວກເຮົາ (ອົງການສະຫະປະຊາຊາດ, ປະເທດເພື່ອນມິດ ແລະ ຄູ່ຮ່ວມພັດທະນາ) ຈະໄດ້ຮ່ວມກັນສ້າງກົນໄກການເຮັດວຽກທີ່ດີໃນອະນາຄົດ ໂດຍສະເພາະດ້ານນະໂຍບາຍ, ຂອດການປະສານງານ, ການວາງແຜນ ແລະ ການຊຸກຍູ້-ຕິດຕາມການຈັດຕັ້ງປະຕິບັດວຽກງານ ໃຫ້ສອດຄ່ອງ ແລະ ມີປະສິດທິຜົນ. ຫວັງຢ່າງຍິ່ງວ່າ ບັນດາຄູ່ຮ່ວມພັດທະນາ ຈະສະໜັບສະໜູນ ສປປ ລາວ ທາງດ້ານທຶນຮອນ, ເຕັກນິກວິຊາການ ແລະ ອື່ນໆ ເຂົ້າໃນວຽກບູລິມະສິດ ໃຫ້ຫຼາຍຂຶ້ນກວ່າເກົ່າ ພ້ອມທັງ ສະເໜີໃຫ້ລະດົມແຫຼ່ງທຶນໃໝ່ໆ ທີ່ມີຄຸນນະພາບ ເຂົ້າມາຊ່ວຍສະໜັບສະໜູນການ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ພ້ອມທັງຈະໄດ້ມີການປະເມີນຄືນບັນດາໜ່ວຍງານຂະແໜງການ ແລະ ປັບປຸງໃຫ້ເຫດເໝາະກັບສະພາບຄວາມເປັນຈິງ, ເຊິ່ງຈະໄດ້ມີການປຶກສາຫາລື ສະເພາະອີກເທື່ອນຶ່ງກ່ຽວກັບວຽກດັ່ງກ່າວ ກັບອົງການ ສະຫະປະຊາຊາດ ແລະ ຄູ່ຮ່ວມງານທັງ 10 ໜ່ວຍງານຂະແໜງການ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ໃນກອງປະຊຸມມື້ນີ້ຈະໄດ້ມີການປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນ ຕໍ່ຮ່າງສະບັບທີ 5 ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງຍຸດທະສາດດ້ານການເງິນ ແລະ ກອບການຕິດຕາມ - ປະເມີນຜົນ ເພື່ອສະໜັບສະໜູນການຈັດຕັ້ງ

ປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ລາຍງານຄວາມຄືບໜ້າໃນການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ພ້ອມທັງແຈ້ງໃຫ້ຊາບກ່ຽວກັບການຈັດກອງປະຊຸມສົນທະນາລະດັບສູງ ເພື່ອນຳຜົນຂອງກອງປະຊຸມດັ່ງກ່າວ ມານຳສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ນຳສະເໜີຮ່າງຖະແຫຼງການວຽງຈັນ ສະບັບທີ III, ຄວາມຄືບໜ້າຂອງ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນ 2024 ທີ່ຜ່ານມາ ແລະ ການປະກອບສ່ວນຂອງໜ່ວຍງານຂະແໜງການ ຕໍ່ການຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ກໍ່ຄືປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດປະຈຳປີ 2025 ແລະ ແຜນປີ 2026, ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030). ພິເສດ, ຂ້າພະເຈົ້າຕາງໜ້າໃຫ້ ລັດຖະບານ ສປປ ລາວ ກໍ່ຄື ກະຊວງການເງິນ ຂໍຖືໂອເກາດພິເສດນີ້ ແຈ້ງຮຽນເຊີນ ບັນດາການນຳຂັ້ນສູງ, ບັນດາທ່ານເອກະອັກຄະລັດຖະທູດ, ຫົວໜ້າອົງການຈັດຕັ້ງສາກົນ ທີ່ບໍ່ມີຫ້ອງການ ປະຈຳ ສປປ ລາວ ມາເຂົ້າຮ່ວມກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ທີ່ຈະໄດ້ຈັດຂຶ້ນໃນວັນທີ 18 – 20 ພະຈິກ 2025 ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ ດ້ວຍ.

ອີກເທື່ອໜຶ່ງ, ຂໍສະແດງຄວາມຂອບໃຈມາຍັງ ທ່ານ ບັກໂຄເດັຍ ເບີຄານ໋ອຟ ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ທີ່ໃຫ້ກຽດເປັນປະທານຮ່ວມກອງປະຊຸມ. ຂໍສະແດງຄວາມຂອບໃຈ ບັນດາທ່ານແຂກທີ່ມີກຽດທຸກທ່ານ ທີ່ໄດ້ສະຫຼະເວລາເຂົ້າຮ່ວມກອງປະຊຸມໃນມື້ນີ້.

ສຸດທ້າຍນີ້, ຂໍອວຍພອນໄຊອັນປະເສີດມາຍັງ ທ່ານປະທານຮ່ວມ ແລະ ບັນດາທ່ານແຂກທີ່ມີກຽດທີ່ເຂົ້າຮ່ວມກອງປະຊຸມ ຈົ່ງມີສຸຂະພາບແຂງແຮງ ມີຄວາມຜາສຸກໃນຊີວິດສ່ວນຕົວ ແລະ ຄອບຄົວ ສືບຕໍ່ພັດທະນາ ສປປ ລາວ ໃຫ້ກ້າວໄປຢ່າງບໍ່ຢຸດຢັ້ງ.

**ນະໂອກາດອັນສະຫງ່າລາສີນີ້ ຂ້າພະເຈົ້າຂໍກ່າວເປີດກອງປະຊຸມ ຢ່າງເປັນທາງການ ນັບແຕ່ວິນາທີນີ້ເປັນຕົ້ນໄປ.**

**(ຂໍຂອບໃຈ) !**